ຫ້ອງວ່າການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

---

# ບົດສະຫລຸບການຈັດຕັ້ງປະຕິບັດໜ້າວຽກຂອງ ທລຍ

## (ປະຈຳເດືອນ 05/2014)

ຄະນະຮັບຜິດຊອບ ທລຍ ສູນກາງ

*ກະກຽມໂດຍ:* ໜ່ວຍງານຕິດຕາມປະເມີນຜົນ

20 ມິຖຸນາ 2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຫ້ອງວາການລັດຖະບານ

ຄະນະພັດທະນາຊົນນະບົດ ແລະ

ລຶບລ້າງຄວາມທຸກຍາກຂັ້ນສູນກາງ

**ກອງທຶນຫຼຸດຜ່ອນຄວາມທຸກຍາກ**

# <u>ບົດລາຍງານ</u>

**ຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານ ທລຍ ປະຈຳເດືອນ ພຶດສະພາ 2014**

## *I. ສະພາບການໂດຍລວມ*

ໂດຍລວມແລ້ວ, ວຽກທີ່ພົ້ນເດັ່ນພາຍໃນເດືອນ ພຶດສະພາ 2014 ຂອງ ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ລວມມີ:

1) ຜົນການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ ຂອງ ສົກປີ 2011 - 2012 ແລະ 2012 - 2013.
2) ການປະເມີນຜົນການຈັດຕັ້ງປະຕິບັດກາງສະໄໝ ຂອງ ໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ.
3) ຜົນການຈັດຕັ້ງປະຕິບັດວຽກງານດ້ານວິຊາສະເພາະຂອງແຕ່ລະພະແນກ.

## *II. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານພາຍໃນເດືອນ*

### 1. ຜົນການຈັດຕັ້ງປະຕິບັດ 262 ໂຄງການການ ຂອງ ສົກປີ 2011 - 2012 (ຮອບວຽນ 9)

#### 1.1. <u>ດ້ານການກໍ່ສ້າງ</u>

ສະຫຼຸບແລ້ວ ການຈັດຕັ້ງປະຕິບັດໂຄງການ ຂອງ ສົກປີ 2011-2012 ນັ້ນ ແມ່ນຍັງເຫຼືອພຽງ 9 ໂຄງການເທົ່ານັ້ນທີ່ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ ຄື 2 ໂຄງການຢູ່ ແຂວງເຊກອງ, 1 ໂຄງການຢູ່ ແຂວງ ຫລວງນ້ຳທາ ແລະ 6 ໂຄງການຢູ່ ແຂວງ ອັດຕະປື (ຕາຕະລາງ1 ແລະ 2).

ສຳລັບ *2 ໂຄງການທີ່ພວມຈັດຕັ້ງປະຕິບັດຢູ່ແຂວງເຊກອງ ລວມມີ: ໂຄງການກໍ່ສ້າງໂຮງຮຽນປະຖົມ ແລະ ລະບົບນ້ຳລິນ.* ການກໍ່ສ້າງໂຄງການມີຄວາມຊັກຊ້າ ກໍ່ຍ້ອນວ່າ ເສັ້ນທາງໄປຫາທີ່ຕັ້ງຂອງໂຄງການການ (100 ກິໂລແມັດ ແລະ 80 ກິໂລແມັດ ຕາມລຳດັບ) ມີຄວາມເປເພຢ່າງໜັກ ແລະ ຫາກໍ່ຊ້ອມແປງສຳເລັດໃນເດືອນ ກຸມພາ 2014 ຜ່ານມາ. ສະນັ້ນ, ບໍລິສັດຮັບເໝົາໂຄງການ ທລຍ ຈິ່ງຫາກໍ່ເລີ່ມຈັດຕັ້ງປະຕິບັດໜ້າວຽກຂອງຕົນໃນເດືອນ ພຶດສະພາ 2014 ຊຶ່ງປະຈຸບັນກາລັງຢູ່ໃນຂັ້ນຕອນຂົນວັດສະດຸອຸປະກອນ ແລະ *6 ໂຄງການພວມຈັດຕັ້ງປະຕິບັດຢູ່ແຂວງອັດຕະປື ລວມມີ: ການກໍ່ສ້າງນ້ຳບາດານ 4 ໂຄງການ ແລະ ຂຸດນ້ຳສ້າງໃສ່ທໍ່ 2 ໂຄງການ* ການກໍ່ສ້າງໂຄງການມີຄວາມຊັກຊ້າ ກໍ່ຍ້ອນວ່າ ພື້ນທີ່ດັ່ງກ່າວເປັນເຂດທີ່ຂາດແຄນແຫຼ່ງນ້ຳ ອີງຕາມຂໍ້ມູນຈາກພະນັກງານ ທລຍ ຢູ່ສະໜາມ ໄດ້ໃຫ້ຮູ້ວ່າ ຄວາມເລິກຂອງບໍ່ນ້ຳໂດຍສະເລັ່ຍ ແມ່ນປະມານ 80 ແມັດ ຈິ່ງມີນ້ຳ. ບາງຄັ້ງ, ການຂຸດເຈາະ ກໍ່ບໍ່ພົບເຫັນແຫຼ່ງນ້ຳ. ສະນັ້ນ, ຈິ່ງໃຊ້ເວລາພໍສົມຄວນ.

ຕາຕະລາງ 1. ຄວາມຄືບໜ້າແບ່ງຕາມແຂວງ

| ຊື່ແຂວງ | ຈ/ນ ໂຄງການ | ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ | | | | |
|---|---|---|---|---|---|---|
| | | 0 | <50% | >=50% | 100% | ລວມ |
| ຫຼວງນ້ຳທາ | 26 | 0 | 1 | 0 | 25 | 26 |
| ຫົວພັນ | 107 | 0 | 0 | 0 | 107 | 107 |
| ຊຽງຂວາງ | 32 | 0 | 0 | 0 | 32 | 32 |
| ສະຫວັນນະເຂດ | 41 | 0 | 0 | 0 | 41 | 41 |
| ສາລະວັນ | 14 | 0 | 0 | 0 | 14 | 14 |
| ເຊກອງ | 25 | 1 | 1 | 0 | 23 | 25 |
| ອັດຕະປື | 17 | 0 | 2 | 4 | 11 | 17 |
| ລວມ | 262 | 1 | 4 | 4 | 253 | 262 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມປະເມີນຜົນ, ທລຍ, ພຶດສະພາ 2014

ຕາຕະລາງ 2. ຄວາມຄືບໜ້າແບ່ງຕາມຂະແໜງ

| ຂະແໜງການ | ຈ/ນ ໂຄງການ | ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ | | | | |
|---|---|---|---|---|---|---|
| | | 0% | <50% | >=50% | 100% | ລວມ |
| ສຶກສາ | 73 | 0 | 1 | | 71 | 73 |
| ທຶນຄູ | 0 | 0 | 0 | 0 | 0 | 0 |
| ຄວາມມະນາຄົມ | 45 | 0 | 0 | 0 | 45 | 45 |
| ພະລັງງານໄຟຟ້າ | 3 | 0 | 0 | 0 | 3 | 3 |
| ອຸປະກອນການແພດ | 2 | 0 | 0 | 0 | 2 | 2 |
| ອາຄານສາທາລະນະສຸກ | 7 | 0 | 0 | 0 | 7 | 7 |
| ນ້ຳສະອາດ | 112 | 1 | 2 | 4 | 104 | 112 |
| ທຶນຮຽນດ້ານສາທາ | 1 | 0 | 0 | 0 | 1 | 1 |
| ກະສິກຳ | 19 | 0 | 0 | 0 | 19 | 19 |
| ລວມ | 262 | 1 | 4 | 4 | 253 | 262 |

ແຫຼ່ງຂໍ້ມູນ: ພະແນກຕິດຕາມປະເມີນຜົນ ທລຍ, ພຶດສະພາ 2014

1.2. ດ້ານການເງິນ

ການເບີກຈ່າຍສໍາລັບການກໍ່ສ້າງໂຄງການໃນສົກປີ 2011-2012 ມາຮອດທ້າຍເດືອນ ພຶດສະພາ 2014 ແມ່ນ **58,348,946,947** ກີບ (ຕາຕະລາງ3)

ຕາຕະລາງ 3. ຄວາມຄືບໜ້າດ້ານການເງິນ

| ຮອບວຽນ | ແຂວງ | ລວມ | | | |
|---|---|---|---|---|---|
| | | IDA | SDC | Water | Total |
| 9 | ອັດຕະປື | 2,209,312,601 | 840,747,839 | - | 3,050,060,440 |
| | ຫົວພັນ | 11,864,275,896 | 3,882,819,964 | 506,546,975 | 16,253,642,835 |
| | ຫລວງນໍ້າທາ | 1,941,177,582 | 2,361,252,443 | 634,129,625 | 4,936,559,650 |
| | ເຊກອງ | 3,345,732,566 | 359,831,932 | 3,231,102,405 | 6,936,666,903 |
| | ສາລະວັນ | 3,447,271,446 | 401,465,502 | 678,421,411 | 4,527,158,359 |
| | ສະວັນນະເຂດ | 9,851,238,833 | 2,230,937,461 | 1,409,919,586 | 13,492,095,880 |
| | ຊຽງຂວາງ | 5,761,439,616 | 1,878,993,665 | 1,512,329,599 | 9,152,762,880 |
| | ລວມ | **38,420,448,540** | **11,956,048,806** | **7,972,449,601** | **58,348,946,947** |

ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ທລຍ, ພຶດສະພາ 2014

IDA : ອົງຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ.

SDC : ອົງການເພື່ອການພັດທະນາແລະ ຮ່ວມມືແຫ່ງປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນໍ້າສະອາດຂອງ SDC.

2. **ຜົນການຈັດຕັ້ງປະຕິບັດ 393 ໂຄງການການ ຂອງ ສົກປີ 2012 - 2013 (ຮອບວຽນ10)**

2.1. ດ້ານການກໍ່ສ້າງ

ສໍາລັບຜົນການຈັດຕັ້ງປະຕິບັດໂຄງການຂອງສົກປີ 2012-2013 ນັ້ນມາຮອດທ້າຍເດືອນ ພຶດສະພາ 2014 ມີພຽງ 12 ໂຄງການເທົ່ານັ້ນ ທີ່ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດຄື ມີ 4 ໂຄງການຢູ່ ແຂວງອັດຕະປື, 1 ໂຄງການຢູ່ແຂວງຫຼວງນໍ້າທາ, 3 ໂຄງການຢູ່ແຂວງຫຼວງພະບາງ, 1 ໂຄງການຢູ່ແຂວງຜົ້ງສາລີ, 2 ໂຄງການຢູ່ແຂວງເຊກອງ, ແລະ 1 ໂຄງການຢູ່ແຂວງ ສະຫວັນນະເຂດ (ຕາຕະລາງ 4 ແລະ 5).

ຕາຕະລາງ 4. ຄວາມຄືບໜ້າແບ່ງຕາມແຂວງ

| ຊື່ແຂວງ | ຈ/ນ ໂຄງການ | ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ | | | | |
|---|---|---|---|---|---|---|
| | | 0% | <50% | >=50% | 100% | ລວມ |
| ຜົ້ງສາລີ | 25 | 0 | 0 | 1 | 24 | 25 |
| ອຸດົມໄຊ | 54 | 0 | 0 | 0 | 54 | 54 |
| ຫຼວງພະບາງ | 44 | 0 | 0 | 3 | 41 | 44 |
| ຫຼວງນໍ້າທາ | 29 | 0 | 1 | 0 | 28 | 29 |
| ຫົວພັນ | 89 | 0 | 0 | 0 | 89 | 89 |
| ຊຽງຂວາງ | 34 | 0 | 0 | 0 | 34 | 34 |
| ສະຫວັນນະເຂດ | 56 | 0 | 0 | 1 | 55 | 56 |
| ສາລະວັນ | 19 | 0 | 0 | 0 | 19 | 19 |
| ເຊກອງ | 23 | 0 | 1 | 1 | 21 | 23 |
| ອັດຕະປື | 20 | 1 | 0 | 3 | 16 | 20 |
| **ລວມ** | **393** | **1** | **2** | **9** | **381** | **393** |

<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມປະເມີນຜົນ, ຫລຍ, ພຶດສະພາ 2014

ຕາຕະລາງ 5. ຄວາມຄືບໜ້າແບ່ງຕາມຂະແໜງການ

| ຂະແໜງການ | ຈ/ນ ໂຄງການ | ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ | | | | |
|---|---|---|---|---|---|---|
| | | 0% | <50% | >=50% | 100% | ລວມ |
| ສຶກສາ | 90 | 0 | 0 | 2 | 88 | 90 |
| ທຶນການສຶກສາ | 0 | 0 | 0 | 0 | 0 | 0 |
| ຄົມມະນາຄົມ | 106 | 0 | 1 | 0 | 105 | 106 |
| ພະລັງງານໄຟຟ້າ | 7 | 0 | 0 | 0 | 7 | 7 |
| ສາທາ | 17 | 0 | 0 | 1 | 16 | 17 |
| ນໍ້າສະອາດ | 152 | 1 | 1 | 6 | 144 | 152 |
| ທຶນສາທາ | 2 | 0 | 0 | 0 | 2 | 2 |
| ກະສິກຳ | 19 | 0 | 0 | 0 | 19 | 19 |
| **ລວມ** | **393** | **1** | **2** | **9** | **381** | **393** |

ແຫຼ່ງຂໍ້ມູນ: ພະແນກຕິດຕາມປະເມີນຜົນ, ຫລຍ, ພຶດສະພາ 2014

### 2.2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຮອບວຽນ 10 (GOL) ຮອດທ້າຍເດືອນ ພຶດສະພາ 2014

#### 2.2.1. ຄວາມຄືບໜ້າດ້ານການຈັດຕັ້ງປະຕິບັດກິດຈະກໍາ:

ການຈັດຕັ້ງປະຕິບັດໂຄງການຍ່ອຍບ້ອງທຶນສົມທົບຂອງລັດຖະບານ ຈຳນວນທັງໝົດ 86 ໂຄງການນັ້ນ, ມາຮອດທ້າຍເດືອນ ພຶດສະພາ 2014, ມີ 86 ໂຄງການ ຫຼື ເທົ່າກັບ 100 % ແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ *(ລາຍລະອຽດເບິ່ງຕາຕະລາງ 6 ລຸ່ມນີ້)*

ຕາຕະລາງ 6: ຄວາມຄືບໜ້າຂອງໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ພຶດສະພາ 2014 (ແຍກຕາມຂະແໜງ):

| ຂະແໜງການ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ສຶກສາ | 0 | 0 | 0 | 15 | 15 | 4,121,567,983 |
| ຄົມມະນາຄົມ | 0 | 0 | 0 | 11 | 11 | 2,206,621,934 |
| ພະລັງງານໄຟຟ້າ | 0 | 0 | 0 | 2 | 2 | 637,591,518 |
| ສາທາລະນະສຸກ | 0 | 0 | 0 | 2 | 2 | 224,811,919 |
| ນໍ້າສະອາດ | 0 | 0 | 0 | 40 | 50 | 7,996,147,554 |
| ກະສິກໍາ | 0 | 0 | 0 | 6 | 6 | 813,259,092 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ພຶດສະພາ 2014

ຕາຕະລາງ 7: ໂຄງການສົບທົບທຶນລັດຖະບານ ຮອດທ້າຍເດືອນ ພຶດສະພາ 2014 (ແຍກຕາມແຂວງ)

| ແຂວງ | 0% | <50% | >50% | 100% | ລວມ | ງົບປະມານ |
|---|---|---|---|---|---|---|
| ຫຼວງນໍ້າທາ | 0 | 0 | 0 | 18 | 18 | 2,239,400,477 |
| ຫົວພັນ | 0 | 0 | 0 | 21 | 21 | 3,493,492,695 |
| ຊຽງຂວາງ | 0 | 0 | 0 | 12 | 12 | 2,487,091,004 |
| ສະຫວັນນະເຂດ | 0 | 0 | 0 | 17 | 17 | 3,594,450,075 |
| ສາລະວັນ | 0 | 0 | 0 | 6 | 6 | 1,396,573,598 |
| ເຊກອງ | 0 | 0 | 0 | 6 | 6 | 1,349,492,008 |
| ອັດຕະປື | 0 | 0 | 0 | 6 | 6 | 1,439,500,143 |
| ລວມ | 0 | 0 | 0 | 86 | 86 | 16,000,000,000 |
| ເປີເຊັນ | 0% | 0% | 0% | 100% | | |

ແຫລ່ງຂໍ້ມູນ: ພະແນກຕິດຕາມ-ປະເມີນຜົນ ພຶດສະພາ 2014

### 2.3. ດ້ານການເງິນ

ມາຮອດທ້າຍເດືອນ ພຶດສະພາ 2014, ການເບີກຈ່າຍສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນ **67,027,951,381** ກີບ ລາຍລະອຽດດັ່ງຕາຕະລາງ 8 ລຸ່ມນີ້:

ຕາຕະລາງ 8. ຄວາມຄືບໜ້າດ້ານການເງິນ

| ຮອບວຽນ | ແຂວງ | Total | | | | |
|---|---|---|---|---|---|---|
| | | IDA | GoL | SDC | Water | Total |
| 10 | ອັດຕະປື | 1,721,084,170 | - | 567,282,096 | 227,988,925 | 2,516,355,191 |
| | ຫົວພັນ | 5,405,357,451 | 3,435,606,906 | 3,587,987,597 | 2,435,950,569 | 14,864,902,523 |
| | ຫລວງນໍ້າທາ | 299,663,066 | 2,230,475,545 | 606,383,605 | 592,128,969 | 3,728,651,185 |
| | ຫລວງພະບາງ | 6,843,974,881 | - | 1,577,609,440 | - | 8,421,584,321 |
| | ອຸດົມໄຊ | 11,693,441,656 | - | - | - | 11,693,441,656 |
| | ຜົ້ງສາລີ | 2,443,218,402 | - | 2,251,034,243 | - | 4,694,252,645 |
| | ສາລະວັນ | 2,067,409,086 | 1,396,550,003 | 26,867,500 | 960,674,920 | 4,451,501,509 |
| | ສະຫວັນນະເຂດ | 4,567,397,676 | - | 1,478,461,609 | 808,879,068 | 6,854,738,353 |
| | ເຊກອງ | 1,039,707,807 | 1,392,293,835 | 1,992,563,550 | 315,890,300 | 4,740,455,491 |
| | ຊຽງຂວາງ | 3,842,665,072 | - | 1,013,218,450 | 206,184,985 | 5,062,068,507 |
| | ລວມ | **39,923,919,266** | **8,454,926,289** | **13,101,408,089** | **5,547,697,736** | **67,027,951,381** |

ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ທລຍ, ພຶດສະພາ 2014

IDA : ອົງຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ.

SDC : ອົງການເພື່ອການພັດທະນາແລະ ຮ່ວມມືແຫ່ງປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນໍ້າສະອາດຂອງ SDC.

GOL : ໂຄງການລົງທຶນທຶນລັດທະບານ

## 3. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ບັນດາໂຄງການການຍ່ອຍ ຂອງ ສົກປີ 2013 - 2014 (ຮອບວຽນ 11)

ມາຮອດທ້າຍເດືອນ ພຶດສະພາ 2014, ການຈັດຕັ້ງປະຕິບັດໂຄງການຍ່ອຍ ຂອງ ສົກປີ 2013 - 2014 ໄດ້ຜ່ານບັນດາຂັ້ນຕອນລຸ່ມນີ້ແລ້ວ:

1) ຈໍານວນໂຄງການທີ່ສະພາແຫ່ງຊາດ ໄດ້ຮັບຮອງ ມີທັງໝົດ 423 ໂຄງການ ໂດຍມີງົບປະມານ 79,556 ຕື້ ກີບ (ທຶນພາຍໃນ 16,000 ຕື້ ກີບ ແລະ ທຶນຕ່າງປະເທດ 63,556 ຕື້ ກີບ).
2) ຈໍານວນໂຄງການທີ່ຜ່ານການສໍາຫຼວດ ແລະ ອອກແບບ ຂອງ ທລຍ ແລະ ພວມຢູ່ໃນຂັ້ນຕອນປະມູນ ແມ່ນມີທັງໝົດ 328 ໂຄງການ ໂດຍຄິດເປັນງົບປະມານ 78,321 ຕື້ ກີບ. ໃນນັ້ນ, ມີ 229 ໂຄງການ ເປັນໂຄງການທີ່ຜ່ານການຮັບຮອງຈາກສະພາແຫ່ງຊາດແລ້ວ ( ຫຼື ປະມານ 54,967 ຕື້ ກີບ), ແຕ່ຍັງມີ 99 ໂຄງການ ທີ່ຍັງບໍ່ທັນໄດ້ຜ່ານສະພາແຫ່ງຊາດເທື່ອໂດຍຄິດເປັນງົບປະມານ 23,354 ຕື້ ກີບ (ຕາຕະລາງ 9 ແລະ 10 ) ຊຶ່ງປະຈຸບັນກໍາລັງຢູ່ຂັ້ນຕອນການປະມູນ.

ຕາຕະລາງ 9. ໂຄງການທີ່ຜ່ານສະພາ, ແຕ່ບໍ່ຜ່ານການສຳຫຼວດອອກແບບ ຂອງ ທລຍ

ຫົວໜ່ວຍ: ລ້ານ ກີບ

| ແຂວງ | ຈຳນວນ ໂຄງການທີ່ຜ່ານ ສະພາ | ງົບປະມານ | ຈຳນວນໂຄງການທີ່ ຜ່ານສະພາ ແລະ ສຳ ຫຼວດ-ອອກແບບ ຂອງ ທລຍ | ງົບປະມານ | ຈຳນວນໂຄງການທີ່ ຜ່ານສະພາ, ແຕ່ບໍ່ ຜ່ານການສຳຫຼວດ ແລະ ອອກແບບ ຂອງ ທລຍ | ງົບປະມານ |
|---|---|---|---|---|---|---|
| ຜົ້ງສາລີ | 25 | 5,233.50 | 18 | 4,387.04 | 9 | 846.46 |
| ອຸດົມໄຊ | 76 | 12,838.00 | 39 | 9,580.22 | 37 | 3,257.78 |
| ຫຼວງນ້ຳທາ | 29 | 3,809.09 | 0 | 0.00 | 29 | 3,809.09 |
| ຫຼວງພະບາງ | 66 | 9,589.26 | 16 | 3,777.72 | 50 | 5,811.54 |
| ຫົວພັນ | 78 | 15,489.62 | 56 | 11,478.47 | 22 | 4,011.15 |
| ຊຽງຂວາງ | 36 | 9,068.47 | 23 | 5,290.83 | 13 | 3,777.64 |
| ສະຫວັນນະເຂດ | 49 | 11,509.40 | 38 | 10,531.22 | 11 | 978.18 |
| ສາລະວັນ | 16 | 4,643.36 | 13 | 3,305.10 | 3 | 1,338.26 |
| ເຊກອງ | 21 | 5,072.50 | 10 | 2,676.62 | 11 | 2,395.88 |
| ອັດຕະປື | 27 | 2,303.07 | 16 | 3,939.66 | 11 | (1,636.59) |
| ລວມ | **423** | **79,557** | **229** | **54,967** | **196** | **24,589** |

<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມປະເມີນຜົນ, ທລຍ, ພຶດສະພາ 2014

ຕາຕະລາງ 9 ໄດ້ຊີ້ໃຫ້ເຫັນວ່າ ມີພຽງ 229 ໂຄງການທີ່ຜ່ານສະພາແຫ່ງຊາດ ໄດ້ຖືກບັນຈຸເຂົ້າໃນບັນຊີປະມູນ ຂອງ ທລຍ. ສ່ວນ 196 ໂຄງການທີ່ຜ່ານສະພາແລ້ວນັ້ນ ແມ່ນຖືກຍົກເລີກ ເພາະວ່າບໍ່ຜ່ານການສຳຫຼວດ ແລະ ອອກແບບ ຂອງ ທລຍ ກໍ່ຄື ບາງໂຄງການບໍ່ຜ່ານ ຍ້ອນວ່າ ງົບປະມານກໍ່ສ້າງສູງກວ່າເພດານງົບປະມານ ຂອງ ກຸ່ມບ້ານ. ບາງໂຄງການ ມີທີ່ຕັ້ງບໍ່ເໝາະສົມ ແລະ ບໍ່ມີລັກສະນະຍືນຍົງ.

ຕາຕະລາງ8 ລຸ່ມນີ້ ໄດ້ຊີ້ໃຫ້ເຫັນວ່າ ມີ 99 ໂຄງການທີ່ຜ່ານການສຳຫຼວດແລ້ວ, ແຕ່ຍັງບໍ່ໄດ້ສະເໜີຕໍ່ສະພາແຫ່ງຊາດ ເພື່ອຮັບຮອງເທື່ອ.

ສາເຫດຕົ້ນຕໍທີ່ເຮັດໃຫ້ຈຳນວນໂຄງການທີ່ຜ່ານສະພາແຫ່ງຊາດ ມີຄວາມແຕກຕ່າງກັນຫຼາຍກັບຈຳນວນໂຄງການທີ່ ທລຍ ຈະຈັດຕັ້ງປະຕິບັດ ກໍ່ຍ້ອນວ່າ ສອງໜ່ວຍງານ ມີຄວາມແຕກຕ່າງໃນໄລຍະກຳນົດສົກປີງົບປະມານ ກໍ່ຄື ສະພາແຫ່ງຊາດ ເປີດປະຊຸມເພື່ອຜ່ານສົກປີງົບປະມານ ຂອງ ລັດ ໃນເດືອນ ກຸມພາ 2014 ເຊິ່ງໃນໄລຍະນີ້ ທລຍ ພວມຈັດຕັ້ງປະຕິບັດການສຳຫຼວດ ແລະ ອອກແບບ. ສະນັ້ນ, 423 ໂຄງການ ທີ່ສະພາແຫ່ງຊາດຮັບຮອງແລ້ວນັ້ນ ຍັງບໍ່ແມ່ນຈຳນວນໂຄງການທີ່ຢູ່ພາຍໃຕ້ສົກປີງົບປະມານ 2013-2014 ເທື່ອ.

ຕາຕະລາງ 10. ໂຄງການທີ່ຜ່ານການສຳຫຼວດອອກແບບ ຂອງ ທລຍ, ແຕ່ຍັງບໍ່ທັນສະເໜີຕໍ່ສະພາເທື່ອ

ຫົວໜ່ວຍ: ລ້ານ ກີບ

| | ຈຳນວນໂຄງການ ທີ່ຢູ່ບັນຊີ ເພື່ອປະມູນ ຂອງ ທລຍ | ງົບປະມານ | ໃນນັ້ນ, ໂຄງການທີ່ບໍ່ຜ່ານ ສະພາດັ່ງລຸ່ມນີ້ | ງົບປະມານ |
|---|---|---|---|---|
| ຜົ້ງສາລີ | 23.00 | 5142.19 | 5.00 | 755.15 |
| ອຸດົມໄຊ | 55.00 | 13669.10 | 16.00 | 4088.87 |
| ຫຼວງນ້ຳທາ | 17.00 | 3837.17 | 17.00 | 3837.17 |
| ຫຼວງພະບາງ | 37.00 | 9466.90 | 21.00 | 5689.18 |
| ຫົວພັນ | 70.00 | 14314.22 | 14.00 | 2835.75 |
| ຊຽງຂວາງ | 29.00 | 6860.36 | 6.00 | 1569.53 |
| ສະຫວັນນະເຂດ | 45.00 | 11284.61 | 7.00 | 753.39 |
| ສາລະວັນ | 13.00 | 3704.11 | 0.00 | 399.02 |
| ເຊກອງ | 21.00 | 5679.45 | 11.00 | 3002.83 |
| ອັດຕະປື | 18.00 | 4363.11 | 2.00 | 423.45 |
| ລວມ | **328** | **78,321** | **99** | **23,354** |

<u>ແຫຼ່ງຂໍ້ມູນ</u>: ພະແນກຕິດຕາມປະເມີນຜົນ, ທລຍ, ພຶດສະພາ 2014

3.1. <u>ດ້ານການເງິນ</u>

ມາຮອດທ້າຍເດືອນ ພຶດສະພາ 2014, ການເບີກຈ່າຍສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ ແມ່ນ **316,220,000** ກີບ ລາຍລະອຽດດັ່ງຕາຕະລາງ 11 ລຸ່ມນີ້:

ຕາຕະລາງ 11. ຄວາມຄືບໜ້າດ້ານການເງິນ

| ຮອບວຽນ | ແຂວງ | ລວມ | | | | |
|---|---|---|---|---|---|---|
| | | IDA | GoL | SDC | Water | Total |
| 11 | ອັດຕະປື | - | - | - | - | - |
| | ທົ່ງພັນ | - | - | - | - | - |
| | ຫລວງນໍ້າທາ | 232,240,000 | - | - | - | 232,240,000 |
| | ຫລວງພະບາງ | - | - | - | - | - |
| | ອຸດົມໄຊ | - | - | - | - | - |
| | ຜົ້ງສາລີ | - | - | - | - | - |
| | ສາລະວັນ | - | - | - | - | - |
| | ສະຫວັນນະເຂດ | - | - | - | - | - |
| | ເຊກອງ | 83,980,000 | - | - | - | 83,980,000 |
| | ຊຽງຂວາງ | - | - | - | - | - |
| | ລວມ | 316,220,000 | - | - | - | 316,220,000 |

ແຫຼ່ງຂໍ້ມູນ: ພະແນກບໍລິຫານ-ການເງິນ ທລຍ, ພຶດສະພາ 2014

IDA : ອົງຈັດຕັ້ງເພື່ອການພັດທະນາລະຫວ່າງປະເທດ/ກອງທຶນສາກົນເພື່ອລຸດຜ່ອນຄວາມທຸກຍາກ.

SDC : ອົງການເພື່ອການພັດທະນາແລະ ຮ່ວມມືແຫ່ງປະເທດສະວິດເຊີແລນ.

Water : ໂຄງການກ່ຽວກັບນໍ້າສະອາດຂອງ SDC.

GOL : ໂຄງການສົມທົບທຶນລັດຖະບານ

4. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານສະບຽງອາຫານ

4.1. <u>ຜົນການຈັດຕັ້ງປະຕິບັດກິດຈະກໍາ</u>

- ມາຮອດປະຈຸບັນ, ໂຄງການ ສາມາດສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໄດ້ຈໍານວນທັງໝົດ 158 ກຸ່ມ. ໃນນັ້ນ, 24 ກຸ່ມ ແມ່ນໄດ້ສໍາເລັດການສ້າງແຜນການລົງທຶນ ຂອງ ຄົວເຮືອນ (ຫຼື ສະມາຊິກຂອງກຸ່ມ), ແຜນການລົງທຶນຂອງກຸ່ມ ແລະ ໄດ້ຮັບທຶນສະໜັບສະໜູນຈາກໂຄງການແລ້ວ ເພື່ອຈັດຕັ້ງປະຕິບັດແຜນການລົງທຶນຂອງເຂົາເຈົ້າ (ຕາຕະລາງ 11, 12 ແລະ 13). ອີກ 134 ກຸ່ມ ແມ່ນກໍາລັງຢູ່ໃນໄລຍະ ຂອງ ຂັ້ນຕອນການປະເມີນຄວາມເຂັ້ມແຂງຂອງກຸ່ມ. ຖ້າຫາກຜ່ານການປະເມີນແລ້ວ, ທັງໝົດ ຈະໄດ້ເຂົ້າຮ່ວມໃນຂັ້ນຕອນ "ການສ້າງແຜນການລົງທຶນຂອງຄົວເຮືອນ, ແຜນກຸ່ມ ແລະ ຈັດຕັ້ງປະຕິບັດແຜນການ" ຕາມລໍາດັບ.
- ຈໍານວນແມ່ຍິງທີ່ເປັນສະມາຊິກຂອງກຸ່ມ ມີຈໍານວນເພີ່ມຂຶ້ນຈາກ 46,4% ມາເປັນ 78% ຂອງຈໍານວນທັງໝົດ.
- ມາຮອດປະຈຸບັນ, ໂຄງການ ສໍາເລັດສ້າງ "ສູນໂພຊະນາການຂັ້ນບ້ານ" ຈໍານວນທັງໝົດ 6 ສູນ ເຊິ່ງມີສະມາຊິກທັງໝົດ 118 ຄົນ (ຕາຕະລາງ14).

ຕາຕະລາງ 11. ຈຳນວນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນທັງໝົດ

| ເມືອງ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະມາຊິກ ຂອງ ກຸ່ມ | | | |
|---|---|---|---|---|---|---|
| | | | ຊາຍ | ຍິງ | ຊາຍ (%) | ຍິງ (%) |
| | | | | | | |
| ເຊໂປນ | 18 | 61 | 221 | 639 | 26 | 74 |
| ວຽງທອງ* | 26 | 97 | 1,454 | 918 | 61 | 39 |
| | | | | | | |
| **ລວມ** | **44** | **158** | **1,675** | **1,557** | **52** | **48** |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ, ພຶດສະພາ 2014*

** ປະຈຸບັນ, ເມືອງ ວຽງທອງ ໄດ້ແບ່ງອອກເປັນ ເມືອງຊອນ ແລະ ເມືອງຫົ່ງມ ຕາມດຳລັດ ເລກທີ 338/ນຍ, ລົງວັນທີ 5 ທັນວາ 2013*

ຕາຕະລາງ 12. ກຸ່ມທີ່ຜ່ານການປະເມີນ ຂອງ ໂຄງການ

| ເມືອງ | ບ້ານ | ກິດຈະກຳຫຼັກ ຂອງ ກຸ່ມ | ຈ/ນ ກຸ່ມ | ຈ/ນ ສະມາຊິກ | | | ຈ/ນ ເງິນເກັບ (ກີບ) | ທຶນຊ່ວຍເຫຼືອຈາກ ໂຄງການ |
|---|---|---|---|---|---|---|---|---|
| | | | | ຊາຍ | ຍິງ | ລວມ | | |
| | | | | | | | | |
| ເຊໂປນ | ສະແກງ | ປູກສາລີ, ໝາກເຜັດ, ລ້ຽງປາ, ລ້ຽງໄກ່ | 7 | 36 | 46 | 82 | 9.657.000 | 90.011.500 |
| | ແກ້ງກອີ | ກິດຈະກຳຕໍ່າແຜ່ນແພ | 3 | 0 | 38 | 38 | 3.069.000 | 30.242.000 |
| ວຽງທອງ* | ແທນທີ່ງ | ລ້ຽງໄກ່ ແລະ ໝູ, ຕໍ່າແຜ່ນແພ | 3 | 29 | 23 | 52 | 3.534.000 | 54.115.000 |
| | ຫ້ວຍສາ | ລ້ຽງປາ, ໄກ່ ແລະ ໝູ | 3 | 20 | 12 | 32 | 2.261.000 | 33.563.000 |
| | ດອນຄູນ | ລ້ຽງແບ້, ໝູ ແລະ ໄກ່, ຕໍ່າແຜ່ນແພ | 4 | 53 | 27 | 80 | 10.325.000 | 82.874.000 |
| | ສາກົກ | ລ້ຽງປາ ແລະ ໄກ່, ຕໍ່າແຜ່ນແພ | 4 | 48 | 22 | 70 | 7.720.000 | 71.671.000 |
| | | | | | | | | |
| **ລວມ** | | | **24** | **186** | **168** | **354** | **36.566.000** | **362.476.500** |
| **ສະເລ່ຍ ຕໍ່ ບ້ານ** | | | **4** | **31** | **28** | **59** | **6.094.333** | **60.412.750** |
| **ສະເລ່ຍ ຕໍ່ ກຸ່ມ** | | | | **8** | **7** | **15** | **1.523.583** | **15.103.188** |

*<u>ແຫຼ່ງຂໍ້ມູນ</u>: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ, ພຶດສະພາ 2014*

** ປະຈຸບັນ, ເມືອງ ວຽງທອງ ໄດ້ແບ່ງອອກເປັນ ເມືອງຊອນ ແລະ ເມືອງຫົ່ງມ ຕາມດຳລັດ ເລກທີ 338/ນຍ, ລົງວັນທີ 5 ທັນວາ 2013*

ຕາຕະລາງ 13. ຈຳນວນກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທີ່ຢູ່ໃນໄລຍະຂອງຂັ້ນຕອນປະເມີນ

| ແຂວງ | ກຸ່ມບ້ານ | ຈ/ນ ບ້ານ | ຈ/ນ ກຸ່ມ | ຈ/ນ ສະມາຊິກ | | | ຈ/ນເງິນທ້ອນ (ກີບ) |
|---|---|---|---|---|---|---|---|
| | | | | ຍິງ | ຊາຍ | ລວມ | |
| ສະຫວັນນະເຂດ | ໄຊຕອນ | 5 | 14 | 52 | 149 | 201 | 4.634.000 |
| | ມັນຈີ | 4 | 12 | 35 | 119 | 154 | 3.262.000 |
| | ແກ້ງຫຼວງ | 4 | 11 | 36 | 133 | 169 | 4.296.000 |
| | ລາດທ່າ | 5 | 14 | 49 | 169 | 218 | 4.626.000 |
| ທົ່ງຜົ້ງ | ທາດທົ່ງມ | 6 | 19 | 72 | 195 | 267 | 3.017.000 |
| | ພົນລໍ | 4 | 12 | 44 | 119 | 163 | 1.770.000 |
| | ຊອນໃຕ້ | 5 | 16 | 69 | 172 | 241 | 1.446.000 |
| | ຊອນເໜືອ | 8 | 25 | 98 | 282 | 380 | 2.268.000 |
| | ສາກົກ | 2 | 7 | 49 | 57 | 106 | 642.000 |
| | ລວມ | 43 | 130 | 504 | 1,395 | 1,899 | 25.961.000 |
| | ສະເລັ່ຍ ຕໍ່ ບ້ານ | | 3 | 12 | 32 | 44 | 603,744 |
| | ສະເລັ່ຍ ຕໍ່ ກຸ່ມ | | | 4 | 11 | 15 | 199,700 |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ, ທລຍ, ພຶດສະພາ 2014*

ຕາຕະລາງ 14. ສູນໂພຊະນາການຂັ້ນບ້ານ

| ແຂວງ | ບ້ານ | ພົນລະເມືອງ | | ຈ/ນ ສະມາຊິກກຸ່ມ | | ຈ/ນສະມາຊິກ ຂອງ ສູນໂພຊະນາການບ້ານ (ແມ່ ແລະ ເດັກ) |
|---|---|---|---|---|---|---|
| | | ຈ/ນ ທັງໝົດ | ຍິງ | ຈ/ນ ທັງໝົດ | ຍິງ | |
| ທົ່ງຜົ້ງ | ຫ້ວຍສາ | 149 | 71 | 32 | 12 | 12 |
| | ແທນທົ່ງ | 270 | 144 | 52 | 23 | 15 |
| | ສາກົກ | 315 | 158 | 70 | 22 | 18 |
| | ດອນດູນ | 347 | 186 | 80 | 27 | 32 |
| ສະຫວັນນະເຂດ | ແກ້ງກອີ | 321 | 143 | 38 | 38 | 16 |
| | ສະແກງ | 399 | 204 | 75 | 39 | 25 |
| ລວມ | 6 | 1801 | 906 | 347 | 161 | 118 |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄ້ຳປະກັນດ້ານໂພຊະນາການ, ທລຍ, ພຶດສະພາ 2014*

### 4.2. ການບໍລິຫານຄຸ້ມຄອງດ້ານການເງິນ

ຮອດທ້າຍເດືອນ ພຶດສະພາ 2014, ມູນຄ່າການເບີກຈ່າຍສຳລັບໂຄງການ ແມ່ນກວມເອົາ 31% ຂອງງົບປະມານທັງໝົດສຳລັບ 4 ປີ (2011 - 2015). ເຖິງຢ່າງໃດກໍດີ, ສັງເກດເຫັນວ່າ ມູນຄ່າການເບີກຈ່າຍສຳລັບສິ່ງເສີມກິດຈະກຳສ້າງລາຍຮັບໂດຍກົງ ຂອງ ຄົວເຮືອນ ແມ່ນກວມເອົາພຽງ 8% ຂອງ ມູນຄ່າ ການໃຊ້ຈ່າຍທັງໝົດເທົ່ານັ້ນ. ກົງກັນຂ້າມ, ການເບີກຈ່າຍສຳລັບເຝິກອົບຮົມ, ທີ່ປຶກສາ, ຈັດຊື້ອຸປະກອນ ແລະ ຄ່າບໍລິຫານ ແມ່ນກວມ 62% ແລະ 22% ຕາມລຳດັບ (ຕາຕະລາງ16).

ຕາຕະລາງ 15. ສະຫຼຸບຄ່າໃຊ້ຈ່າຍທັງໝົດຂອງໂຄງການ

ຫົວໜ່ວຍ: ໂດລາສະຫະລັດ

| ລາຍການ | ງົບປະມານ ຄາດຄະເນ | ງົບປະມານທີ່ໄດ້ຮັບ | ມູນຄ່າໃຊ້ຈ່າຍທັງໝົດ ມາຮອດ 31 ທັນວາ 2013 | ດຸ່ນດ່ຽງ | % ເບີກຈ່າຍ |
|---|---|---|---|---|---|
| ອຸປະກອນ,ທີ່ປຶກສາ, ຝຶກອົບຮົມ | 1.101.500 | 1.061.752 | 680.629 | 420.871 | 62% |
| ຄ່າບໍລິຫານພາຍໃນ | 120.000 | | 26.266 | 93.734 | 22% |
| ກິດຈະກໍາ ຫຼື ໂຄງການ ຂອງ ຊຸມຊົນ | 1.400.000 | | 105.541 | 1.294.459 | 8% |
| ລວມ: | 2.621.500* | 1.061.752 | 812.436 | 1.809.064 | 31% |

*ແຫຼ່ງຂໍ້ມູນ: ໜ່ວຍງານໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນດ້ານໂພຊະນາການ, ທລຍ, ພຶດສະພາ 2014*

## 5. ການຈັດຕັ້ງປະຕິບັດວິຊາສະເພາະ

### 5.1. ພະແນກພັດທະນາຊຸມຊົນ

- ວັນທີ 13-15 ພຶດສະພາ ໄດ້ສໍາເລັດການ ການຈັດຝຶກອົບຮົມ ກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນຢູ່ຂັ້ນສູນກາງ ໃຫ້ກັບພະນັກງານຂັ້ນສູນກາງ (PMT ແລະ ວິຊາການແຕ່ລະພະແນກ) ແລະ ພະນັກງານຂັ້ນແຂວງ ແລະ ຂັ້ນເມືອງຈາກ 3 ແຂວງ , 5 ເມືອງເປົ້າໝາຍທົດລອງ CDD (ເມືອງນອງ ແຂວງສະຫວັນນະເຂດ, ເມືອງຈອມເພັດ ແລະ ເມືອງນໍ້າບາກແຂວງຫລວງພະບາງ, ເມືອງຮຸນ ແລະ ເມືອງໄຊແຂວງອຸດົມໄຊ) ຜູ້ເຂົ້າຮ່ວມທັງໝົດ 65 ທ່ານ ຍິງ 21 ທ່ານ ໂດຍຮັບການຮອນການສອນໂດຍ ທ່ານ ກາມິເນ ຊຽວຊານ ແລະ ທີ່ປຶກສາກ່ຽວກັບ CDD ຈາກປະເທດ ສີລັງກາ.
- ໃນລະຫວ່າງ ເດືອນພຶດສະພາທີ່ຜ່ານມາ ແຕ່ລະເມືອງເປົ້າໝາຍ ທລຍ ໄດ້ຈັດກອງປະຊຸມ ປະຈໍາເດືອນ ແລະ ຝຶກອົບຮົມຄືນ ສໍາລັບຜູ້ປະສານງານກຸ່ມບ້ານ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າກ່ຽວກັບ ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດວຽກງານ ທລຍ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ ໃນເຂດຂອງເຂົາເຈົ້າເອງ.
- ກະກຽວເຄື່ອງມືຕ່າງສໍາລັບຊຸດຝຶກອົບຮົມ ກ່ຽວກັບ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ສໍາລັບຜູ້ປະສານງານກຸ່ມບ້ານ ຢູ່ແຕ່ລະເມືອງເປົ້າໝາຍທົດລອງ CDD.
- ສໍາເລັດການຈັດສິ່ງເຄື່ອງມື IEC ໃຫ້ແກ່ 10 ແຂວງເປົ້າໝາຍຄື: ແຜ່ນພັບ FRM; ແລະ ນະໂຍບາຍກ່ຽວກັບ ການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ.

- ໃນວັນທີ 12-16 ພຶດສະພາ ໄດ້ນຳພານັກຂ່າວລົງເກັບກຳຂ່າວຢູ່ແຂວງຫລວງນ້ຳທາ ແລະ ວັນທີ 27 ພຶດສະພາ ຫາ ວັນທີ 4 ມິຖຸນາ 2014 ໄດ້ນຳພານັກຂ່າວລົງເກັບກຳຂ່າວຢູ່ແຂວງຫົວພັນ ແລະ ຊຽງຂວາງ; ຂ່າວກ່ຽວກັບ ໂຄງລ່າງ ແລະ ການອະນຸລັກ ແຫລ່ງຊັບພະ ຍາກອນທາງທຳມະຊາດ ເພື່ອສ້າງເປັນຂ່າວ ແລະ ສ້າງສາລະຄະດີ.
- ລະຫວ່າງວັນທີ 6-8 ພຶດສະພາ 2014 ທີ່ຜ່ານມາຄະນະວິຊາການ ສິດສະເໝີພາບລະຫວ່າງຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດ ໄດ້ຈັດຝຶກອົບຮົມໃຫ້ພະນັກງານວິຊາການ ທລຍ ຂັ້ນເມືອງຈາກ 19 ເມືອງຂອງ 4 ແຂວງພາກ ເໜືອ *(ແຂວງຫລວງນ້ຳທາ, ແຂວງອຸດົມໄຊ, ແຂວງຫລວງພະບາງ ແລະ ແຂວງຊຽງຂວາງ ຊຶ່ງແມ່ນຜູ້ທີ່ຍັງບໍ່ເຄີຍໄດ້ເຂົ້າຮ່ວມຝຶກອົບຮົມຫົວຂໍ້ດັ່ງກ່າວມາກ່ອນ).* ຝຶກອົບຮົມໄດ້ຈັດຂຶ້ນຢູ່ແຂວງຫລວງນ້ຳທາ, ມີຜູ້ເຂົ້າຮ່ວມທັງໝົດ 21 ທ່ານ (ບໍ່ມີຜູ້ຍິງ). ຜົນການຝຶກອົບຮົມ ກ່ຽວກັບ GESI ສາມາດສັງລວມຫຍໍ້ໄດ້ດັ່ງລຸ່ມນີ້:
  - ມີຄວາມເປັນໄປໄດ້ທີ່ຈະປັບປຸງວຽກ GESI ເຂົ້າໃນວຽກງານ ທລຍ ເພາະເປັນໂຄງການພັດທະນາ ແລະ ຫລຸດຜ່ອນຄວາມທຸກຍາກ,
  - ການຝຶກອົບຮົມໃຫ້ຄວາມຮູ້ຫລາຍແງ່ກ່ຽວກັບ GESI; ໄດ້ຄວາມຮູ້ຫລາຍຈາກການຝຶກອົບຮົມ ແລະ ຈະນຳເອົາບົດຮຽນທີ່ໄດ້ຮຽນມາໄປປະຕິບັດໃນໜ້າວຽກຂອງ ທລຍ
- ໃນລະຫວ່າງວັນທີ 20-22 ພຶດສະພາ 2014 ຄະນະວິຊາການທີ່ຮັບຜິດຊອບວຽກ GESE ກໍ່ໄດ້ຈັດຝຶກອົບຮົມກ່ຽວກັບ GESI ໃຫ້ພະນັກງານວິຊາການ ທລຍ ຂັ້ນເມືອງຈາກ 14 ເມືອງຂອງ 4 ແຂວງພາກໃຕ້ *(ແຂວງສາລະວັນ, ແຂວງສະຫວັນນະເຂດ, ແຂວງເຊກອງ ແລະ ແຂວງອັດຕະປື ຊຶ່ງແມ່ນຜູ້ທີ່ຍັງບໍ່ເຄີຍໄດ້ເຂົ້າຮ່ວມຝຶກອົບຮົມຫົວຂໍ້ດັ່ງກ່າວມາກ່ອນ).* ຝຶກອົບຮົມໄດ້ຈັດຂຶ້ນຢູ່ແຂວງສາລະວັນ, ມີຜູ້ເຂົ້າຮ່ວມທັງໝົດ 17 ທ່ານ, ຍິງ 1 ທ່ານ (ວິຊາການຍິງ). ຜົນການຝຶກອົບຮົມ ກ່ຽວກັບ GESI ສາມາດສັງລວມຫຍໍ້ໄດ້ດັ່ງລຸ່ມນີ້.
  - ຄວາມເປັນໄປໄດ້ທີ່ຈະປັບປຸງວຽກ GESI ເຂົ້າໃນວຽກງານ ທລຍ ເພາະເປັນໂຄງການພັດທະນາແບບມີສ່ວນຮ່ວມ ເຮັດໃຫ້ເປັນ CDD ແລະ ພະນັກງານເມືອງມີຄວາມພ້ອມທີ່ຈະຈັດຕັ້ງປະຕິບັດວຽກ GESI ໃນວຽກງານ ທລຍ

5.2. <u>ພະແນກວຽກວິສະວະກຳ</u>

- ສຳເລັດການເລັດການຝຶກອົບຮົມການຄຸ້ມຄອງສັນຍາໃຫ້ແຂວງພາກເຫນືອ ພ້ອມທັງຮ່ວມກວດກາວຽກກັບທີມງານທະນາຄານໂລກຂອງໂຄງການ LUFSIP
- ສຳເລັດການຮ່ວມປະຊຸມວາງແຜນກັບ KFW ແລະ ສຳເລັດການທົບທວນຄູ່ມືການຈັດຕັ້ງຕ້ານໄພພິບັດ.

5.3.<u>ພະແນກວຽກຕິດຕາມປະເມີນຜົນ</u>

- ສຳເລັດໃນການສ້າງ 11 ຕາຕະລາງ ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນໃນການຕິດຕາມໃນການເກັບກຳຂໍ້ມູນຮອບດ້ານ ກ່ຽວກັບວຽກງານ ທລຍ ເຊັ່ນ: ຕາຕະລາງເກັບກຳຂໍ້ມູນພື້ນຖານຂອງໂຄງການຍ່ອຍ, ຜູ້ໄດ້ຜົນປະໂຫຍດ, ການຈັດເຝິກອົບຮົມ ແລະ ອື່ນໆ.
- ສຳເລັດສ້າງແຜນທີຮອບວຽນ 1-2 ຂອງ ທລຍ (ຂໍ້ມູນໃນແຜນທີເປັນພາສາລາວ).
- ສຳເລັດໃນການໃສ່ລະຫັດໂຄງການຍ່ອຍ 334 ໂຄງການ ຂອງ ສົກປີ 2013-2014 (ຮອບວຽນ 11).

5.4.<u>ພະແນກວຽກບໍລິຫານ ແລະ ການເງິນ</u>

- ທົບທວນກ່ຽວກັບລະບຽບ ແລະ ນະໂຍບາຍຂອງພະນັກງານ ທລຍ ເພື່ອນໍາສະເໜີຕໍ່ຜູ້ໃຫ້ທຶນ: ຢູ່ໃນລະຫວ່າງກະກຽມ ແລະ ສໍາເລັດແລ້ວປະມານ 50% ແລະ ຄາດຄະເນສົ່ງໃຫ້ຜູ້ໃຫ້ທຶນໃນອາທິດທີສອງຂອງເດືອນ ມິຖຸນາ 2014.
- ກະກຽມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຊ່ຽວຊານ ເພື່ອສ້າງຄວາມເຂັ້ມແຂງ ໃນການປັບປຸງ Website ຂອງ ທລຍ ເພື່ອປະກາດຮັບສະໝັກ ແລະ ຄັດເລືອກ: ສໍາເລັດແລ້ວ 80%, ປະຈຸບັນຢູ່ໃນລະຫວ່າງລໍຖ້າຄໍາເຫັນສຸດທ້າຍຂອງຄະນະຮັບຜິດຊອບກະຈາຍຂໍ້ມູນຂ່າວສານ-ສຶກສາ-ປະຊາສໍາພັນ. ຄາດຄະເນສົ່ງໃຫ້ຜູ້ໃຫ້ທຶນມີຄໍາເຫັນໃນອາທິດທີສອງ ຂອງເດືອນມິຖຸນາ.
- ຕິດຕາມການອະນຸມັດອອກສັນຍາໃຫ້ທີ່ປຶກສາຕ່າງປະເທດ ດ້ານການກວດກາພາຍໃນ: ໄດ້ຮັບການອະນຸມັດເປັນທາງການຈາກຜູ້ໃຫ້ທຶນໃນວັນທີ 16 ພຶດສະພາ 2014.
- ຕິດຕາມການໃຫ້ຄໍາເຫັນ ແລະ ອະນຸມັດ ກ່ຽວກັບການຄັດເລືອກທີ່ປຶກສາຕ່າງປະເທດ ຂອງໂຄງການປັບປຸງຊີວິດການເປັນຢູ່ ເພື່ອຄໍ້າປະກັນທາງດ້ານໂພຊະນາການ: ຄະນະກໍາມະການໄດ້ສົ່ງບົດບັນທຶກການເຈລະນາຕໍ່ຮອງກັບຜູ້ສະໝັກທີ່ໄດ້ອັນດັບ 1 ຫາຜູ້ໃຫ້ທຶນ ໃນວັນທີ  ພຶດສະພາ 2014, ປະຈຸບັນຍັງລໍຖ້າຄໍາເຫັນຈາກທະນາຄານໂລກ ຫລັງຈາກນັ້ນຈຶ່ງຮ່າງສັນຍາເຮັດວຽກ.
- ໄດ້ສໍາເລັດການປະເມີນ ແລະ ຄັດເລືອກພະນັກງານ ໃນຕໍາແໜ່ງລຸ່ມນີ້:
  - ເລຂານຸການ ປະຈໍາ ທລຍ ແຂວງຫລວງນໍ້າ
  - ພັດທະນາຊຸມຊົນ ປະຈໍາເມືອງພີນ ແລະ ທ່າປາງທອງ (ເມືອງລະ 1 ຕໍາແໜ່ງ), ແຂວງສະຫວັນນະເຂດ
  - ຜູ້ປະສານງານດ້ານໂພຊະນາການ 01 ຕໍາແໜ່ງ ປະຈໍາຢູ່ວຽງຈັນ
  - ວິຊາການປັບປຸງຊີວິດການເປັນຢູ່ 01 ຕໍາແໜ່ງປະຈໍາເມືອງເຊໂປນ, ແຂວງສະຫວັນນະເຂດ ສໍາລັບໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນທາງດ້ານໂພຊະນາການ.

<u>ວຽກງານຈັດຊື້-ຈັດຈ້າງ</u>

- ສໍາເລັດການຈັດສົ່ງ ແລະ ເບີກຈ່າຍອຸປະກອນການຮຽນການສອນ ສໍາລັບກຸ່ມຈະວີກ ເມືອງລະມາມ ແຂວງເຊກອງ ແລະ ສໍາເລັດສໍາລັບການສ້ອມແປງຫ້ອງການ ທລຍ ເມືອງໝອກ ແຂວງຊຽງຂວາງ ພ້ອມທັງໄດ້ສໍາເລັດການຈັດສົ່ງ ແລະ ເບີກຈ່າຍໃຫ້ໂຮງພິມແລ້ວກ່ຽວການາຈັດພິມປຶ້ມ, ໃບປິວ, ປຶ້ມ- ແຜ່ນພັບແຜ່ນກົບໄກສະແດງຄໍາຄິດຄໍາເຫັນຂອງ ທລຍ.
- ສໍາເລັດການເຊັນສັນຍາວ່າຈ້າງທີ່ປຶກສາ ກ່ຽວກັບວຽກ Baseline Survey ພາຍໃຕ້ໂຄງການ LONG.

## III. *<u>ແຜນການຈັດຕັ້ງປະຕິບັດຕິບັດສໍາລັບເດືອນ ມິຖຸນາ 2014</u>*

ສໍາລັບເດືອນ ມິຖຸນາ 2014 ນີ້ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈະເລັ່ງໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກລຸ່ມນີ້ໃຫ້ບັນລຸຜົນສໍາເລັດຕາມເປົ້າໝາຍທີ່ກໍານົດໄວ້:

- ປະສານກັບທີມງານ LONG ເພື່ອກະກຽມການຈັດຝຶກອົບຮົມກ່ຽວກັບ GESI ສໍາລັບພະ ນັກງານ ທລຍ LONG ຢູ່ 3 ເມືອງ 2 ແຂວງ ຈໍານວນ 37 ທ່ານ ຍິງ 12 ທ່ານ ຊຶ່ງຈະຈັດຂຶ້ນ ໃນລະຫວ່າງທ້າຍເດືອນ ກໍລະກົດ 2014 ນີ້.
- ສ້າງແຜນວຽກຕິດຕາມການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດ ໃນການ ຈັດຕັ້ງກິດຈະກໍາຕ່າງໆຂອງ ທລຍ ໃນຮອບວຽນ 12 ສົກປີ 2013-2014 ເຊັ່ນ: ການມີສ່ວນ ຮ່ວມຂອງແມ່ຍິງໃນການເປັນທີມງານຕ່າງໆຂອງ ທລຍ ແລະ ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຂົາເຈົ້າຄື: ທີມງານການເງິນ, ທີມງານຈັດຊື້ຈັດຈ້າງ, ທີມງານຈັດຕັ້ງປະຕິບັດຂັ້ນບ້ານ. ທັງນີ້ກໍ່ເພື່ອໃຫ້ເຂົາເຈົ້າມີສ່ວນຮ່ວມຢ່າງແທ້ຈິງ ແລະ ມີຄວາມເຂັ້ມແຂງໃຫ້ສົມກັບຄໍາວ່າ CDD.
- ປະສານກັບ ITC ເພື່ອເອົາຂໍ້ມູນຂ່າວສານກ່ຽວກັບ ວຽກງານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຂອງກຸ່ມຜູ້ດ້ອຍໂອກາດທີ່ໄດ້ກະກຽມໄວ້ແຕ່ຕົ້ນປີ 2014 ລົງໃສ່ໃນໜ້າ PRF website.
- ສືບຕໍ່ຊຸກຍູ້ ແລະ ຕິດຕາມການຈັດກອງປະຊຸມປະຈໍາເດືອນ ແລະ ຝຶກອົບຮົມຄືນ ສໍາລັບ ຜູ້ປະສານງານກຸ່ມບ້ານຢູ່ແຕ່ລະເມືອງເປົ້າໝາຍ ໃນຊ່ວງໄລຍະເວລາການຈັດຕັ້ງປະຕິບັດໂຄງການຍ່ອຍ ປະຈໍາຮອບວຽນ 11 ສົກປີ 2013-2014 ນີ້.
- ສືບຕໍ່ປະສານງານກັບ ກົມຂ່າວສານ ສພຍ ວິທະຍຸແຫ່ງຊາດ ລາຍການລຸງສ້າງລຸງສາ , ໜັງສືພິມ ແລະ ໂທລະພາບ ເພື່ອກະຈາຍຂ່າວສານການເຄື່ອນໄຫວວຽກງານຂອງ ທລຍ ຢູ່ແຕ່ລະຂອບເຂດເປົ້າໝາຍ.
- ສືບຕໍ່ຜະລິດເຄື່ອງມືການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ເພື່ອແຈກໃຫ້ກຸ່ມເປົ້າໝາຍທົດລອງ ຈັດຕັ້ງປະຕິບັດການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ.
- ຝຶກອົບຮົມ GRASP-GEAR ໃຫ້ແຂວງຫລວງພະບາງ, ອຸດົມໄຊດ ຜົ້ງສາລີ ແລະ ພະນັກງານເຂົ້າໃຫມ່.
- ລົງກວດກາວຽກ HELVITAS ແລະ ສືບຕໍ່ກວດກາການຈັດຕັ້ງປະຕິບັດຢູ່ແຕ່ງລະແຂວງຂອງ ທລຍ.
- ສ້າງແຜນທີ່ສະແດງ ຈຸດກຸ່ມບ້ານລະດັບເມືອງຂອງ ທລຍ 10 ແຂວງ
- ກະກຽມ ແລະ ສັງລວມຂໍ້ມູນໃສ່ກອງປະຊຸມສະພາບໍລິຫານທີ່ແຂວງ ອັດຕະປື ໃນວັນທີ່ 25-26 ມິຖຸນາ 2014
- ປະກາດຮັບສະໝັກ ແລະ ຄັດເລືອກພະນັກງານ ໃນຕໍາແໜ່ງທີ່ຫວ່າງຂັ້ນສູນກາງ ແລະ ເມືອງ:
  - ຕໍາແໜ່ງ ຫົວໜ້າພະແນກຕິດຕາມ-ປະເມີນຜົນ 01 ຕໍາແໜ່ງ
  - ຕໍາແໜ່ງ ວິໄຈ ແລະ ປະເມີນຜົນ 01 ຕໍາແໜ່ງ
  - ຕໍາແໜ່ງ ຄຸ້ມຄອງງົບປະມານ ແລະ ການເງິນ 01 ຕໍາແໜ່ງ
  - ພັດທະນາຊຸມຊົນເມືອງທາປາງທອງ, ແຂວງສະຫວັນນະເຂດ 01 ຕໍາແໜ່ງ
  - ບໍລິຫານ-ການເງິນເມືອງຊຸນ, ແຂວງອຸດົມໄຊ 01 ຕໍາແໜ່ງ
  - ວິສະວະກອນເມືອງຂວາ, ແຂວງຜົ້ງສາລີ 01 ຕໍາແໜ່ງ
  - ປະສານງານກຸ່ມບ້ານດ້ານປັບປຸງຊີວິດການເປັນຢູ່ 6 ຕໍາແໜ່ງ, ປະຈໍາເມືອງເຊໂປນ 4 ແລະ ນອງ 2 ຕໍາແໜ່ງ , ແຂວງສະຫວັນນະເຂດ ສໍາລັບໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນທາງດ້ານໂພຊະນາການ
  - ປະສານງານກຸ່ມບ້ານດ້ານປັບປຸງຊີວິດການເປັນຢູ່ 4 ຕໍາແໜ່ງ, ປະຈໍາເມືອງຊົນບູລີ ແລະ ສ່ອນ, ແຂວງສະຫວັນນະເຂດ ສໍາລັບໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນທາງດ້ານໂພຊະນາການ.

- ປະສານງານເມືອງ 2 ຕຳແໜ່ງ ປະຈຳເມືອງຮົ່ງມ ແລະ ສ່ອນ, ແຂວງຫົວພັນ ສຳລັບໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນທາງດ້ານໂພຊະນາການ.
- ວິຊາການປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການຂັ້ນເມືອງ 02 ຕຳແໜ່ງປະຈຳເມືອງສ່ອນ, ແຂວງຫົວພັນ ສຳລັບໂຄງການປັບປຸງຊີວິດການເປັນຢູ່ເພື່ອຄໍ້າປະກັນທາງດ້ານໂພຊະນາການ.

- ກະກຽມຄູ່ມືແນະນຳ ແລະ ຝຶກອົບຮົມໃຫ້ພະນັກງານເຂົ້າໃໝ່
- ຕິດຕາມການຈັດສົ່ງສຳລັບການຈັດຊື້ລົດຈັກຈຳນວນ 15 ຄັນ.
- ກະກຽມປະເມີນຜົນ, ຕັດສິນ, ໃບສັ່ງຊື້ ແລະ ເຊັນສັນຍາສຳລັບການຈັດຊື້ລົດໃຫຍ່ ຈຳນວນ 3 ຄັນ
- ຕິດຕາມການຈັດທະບຽນສັນຍາ ແລະ ຈັດສົ່ງຖົງຢາປະຈຳບ້ານ ສຳລັບກຸ່ມບ້ານແບ່ງວິໄລ ເມືອງສະໜາມໄຊ ແຂວງອັດຕະປື.
- ຕິດຕາມການຜະລິດປຶ້ມຄູ່ມືສຳລັບຝຶກອົບຮົມກ່ອນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ປຶ້ມຄູ່ມືສຳລັບການຝຶກອົບຮົມການບົວລະບັດຮັກສາ ຂອງພະແນກວິສະວະກຳ
- ກະກຽມເອກະສານສະເໜີຫາກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງໂຍທາທິການເພື່ອຂໍອະນຸຍາດນຳເຂົ້າ ພ້ອມທັງຍົກເວັ້ນພາສີອາກອນ.
- ຕິດຕາມການຜະລິດ ແລະ ການຈັດສົ່ງສຳລັບຕູ້ຮັບຄຳຄິດຄຳເຫັນ ຂອງ ທລຍ ເມືອງໄຊ ແຂວງອຸດົມໄຊ
- ດຳເນີນຂັ້ນຕອນການສັງລວມປ້າຍຂອງແຕ່ລະແຂວງ, ປະເມີນຜົນ, ຕັດສິນ, ອອກໃບສັ່ງຊື້ ແລະ ເຊັນສັນຍາສຳລັບການຜະລິດປ້າຍໂຄງການຍ່ອຍ ຮອບວຽນທີ 11 ຂອງແຕ່ລະແຂວງ.
- ສືບຕໍ່ດັດແກ້ປຶ້ມຄູ່ມືການຈັດຊື້-ຈັດຈ້າງ ໂຄງການຍ່ອຍຂອງຊຸມຊົນ.
- ກະກຽມບົດປະເມີນຜົນ, ບົດຕັດສິນ, ໃບສັ່ງຊື້ ແລະ ເຊັນສັນຍາ ສຳລັບການຜະລິດປຶ້ມຄູ່ມືໂຄງການທີ່ຂັບເຄື່ອນການຈັດຕັ້ງປະຕິບັດດ້ວຍຊຸມຊົນຢ່າງເຕັມຮູບແບບ ສຳລັບເມືອງທົດລອງ.
- ຕິດຕາມ ແລະ ເກັບກຳລາຄາຫົວໜ່ວຍຂອງສິນຄ້າ, ການຂົນສົ່ງ ແລະ ການບໍລິການຕ່າງໆຂອງບໍລິສັດ/ຫ້າງຮ້ານ/ວິຊາການ ນຳບັນດາແຂວງຕ່າງໆ.
- ຈັດກອງປະຊຸມ ສຳມະນາກ່ຽວກັບ ການປັບປຸງຊີວິດການເປັນຢູ່ ແລະ ໂພສະນາການ ເພື່ອແກ້ໄຂຄວາມທຸກ ຍາກຂອງປະຊາຊົນ ໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ.
- ຈັດກອງປະຊຸມຄັດເລືອກໂຄງການຍ່ອຍຂັ້ນເມືອງຢູ່ແຂວງ ຫົວພັນ ແລະ ແຂວງ ສະຫວັນນະເຂດ.

| | | |
|---|---|---|
| ຜູ້ອຳນວຍການບໍລິຫານ ທລຍ | ຫົວໜ້າພະແນກຕິດຕາມປະເມີນຜົນ | ສັງລວມ ແລະ ລາຍງານ |
| ------------------ | ------------------------ | -------------------- |
| ບຸນກວ້າງ ສຸວັນນະພັນ | ສີວິໄລ ວໍລະຈັກ | ມະນີວັນ ອິນທະປັນຍາ |